# ໃບແຈ້ງຂໍ້ມູນກ່ຽວກັບການລົ້ມລະລາຍ

ກົດໝາຍລົ້ມລະລາຍແມ່ນກົດໝາຍຂອງລັດຖະບານກາງ. ແຜ່ນເຈ້ຍນີ້ໃຫ້ຂໍ້ມູນທົ່ວໄປແກ່ທ່ານກ່ຽວກັບສິ່ງທີ່ຈະເກີດຂຶ້ນໃນກໍລະນີເກີດການລົ້ມລະລາຍ. ຂໍ້ມູນໃນທີ່ນີ້ບໍ່ຄົບຖ້ວນສົມບູນ. ທ່ານອາດຈະຈໍາເປັນຕ້ອງມີຄໍາແນະນໍາດ້ານກົດໝາຍ.

## ເວລາໃດທີ່ທ່ານຍື່ນລົ້ມລະລາຍ

ທ່ານສາມາດເລືອກປະເພດການລົ້ມລະລາຍທີ່ຕອບສະໜອງຄວາມຕ້ອງການຂອງທ່ານໄດ້ດີທີ່ສຸດ (ໂດຍທີ່ທ່ານຕ້ອງມີເງື່ອນໄຂທີ່ເໝາະສົມຕາມກໍານົດທີ່ວາງໄວ້ ອັນໃດນຶ່ງ):

ພາກທີ 7 - ຜູ້ພິທັກຊັບຈະຖືກແຕ່ງຕັ້ງເພື່ອຄວບຄຸມດູແລຊັບສິນຂອງທ່ານ. ທຸກໆຊັບສິນທີ່ມີຄ່າຈະຖືກຂາຍຫຼືປ່ຽນເປັນເງິນເພື່ອມາຊົດໃຊ້ເຈົ້າໜີ້ຂອງທ່ານ. ທ່ານອາດຈະສາມາດຮັກສາສິ່ງຂອງສ່ວນຕົວບາງຈໍານວນໄວ້ ໂດຍສະເພາະແມ່ນອະສັງຫາລິມະຊັບ ໂດຍອີງຕາມກົດໝາຍຂອງລັດບ່ອນທີ່ທ່ານອາໃສຢູ່ ແລະບັນດາກົດໝາຍລັດຖະບານກາງທີ່ກ່ຽວຂ້ອງ.

ພາກທີ 13 - ປົກກະຕິແລ້ວ ທ່ານສາມາດຮັກສາຊັບສິນຂອງທ່ານໄວ້, ແຕ່ທ່ານຕ້ອງມີເງິນຄ່າຈ້າງ ຫຼືມີແຫຼ່ງລາຍຮັບປົກກະຕິອື່ນໆບາງຈໍານວນ ແລະ ທ່ານຕ້ອງເຫັນດີຈ່າຍສ່ວນໜຶ່ງຂອງລາຍຮັບທ່ານໃຫ້ແກ່ເຈົ້າໜີ້ຂອງທ່ານ. ສານຕ້ອງໄດ້ອະນຸມັດແຜນການຊໍາລະໜີ້ ແລະງົບປະມານຂອງທ່ານ. ຜູ້ພິທັກຊັບຈະຖືກແຕ່ງຕັ້ງຂຶ້ນ ແລະຈະເກັບເອົາເງິນຊໍາລະໜີ້ຈາກທ່ານ, ຈ່າຍໃຫ້ເຈົ້າຂອງໜີ້ຂອງທ່ານ, ແລະຮັບປະກັນວ່າທ່ານປະຕິບັດຕາມຂໍ້ກໍານົດຂອງແຜນການຊໍາລະໜີ້ຂອງທ່ານໃຫ້ໄດ້.

ພາກທີ 12 - ຄືກັນກັບພາກທີ 13, ແຕ່ມັນໃຊ້ສໍາລັບແຕ່ຄອບຄົວຊາວກະສິກອນ ແລະ ຄອບຄົວຊາວປະມົງເທົ່ານັ້ນ.

ພາກທີ 11 - ພາກນີ້ສ່ວນໃຫຍ່ແມ່ນນໍາໃຊ້ຕໍ່ຜູ້ປະກອບການທຸລະກິດ. ໃນພາກ 11, ທ່ານອາດຈະສືບຕໍ່ດໍາເນີນທຸລະກິດຂອງທ່ານໄດ້, ແຕ່ເຈົ້າໜີ້ ແລະສານຕ້ອງໄດ້ອະນຸມັດແຜນການຊໍາລະໜີ້ຂອງທ່ານ. ຈະບໍ່ມີຜູ້ພິທັກຊັບ ເວັ້ນເສຍແຕ່ຜູ້ພິພາກສາຕັດສິນວ່າຈໍາເປັນຕ້ອງມີຜູ້ພິທັກຊັບ; ຖ້າມີການແຕ່ງຕັ້ງຜູ້ພິທັກຊັບ, ຜູ້ພິທັກຊັບຈະເປັນຜູ້ຄວບຄຸມດູແລທຸລະກິດ ແລະຊັບສິນຂອງທ່ານ.

ຖ້າທ່ານໄດ້ຍື່ນຄໍາຮ້ອງຂໍລົ້ມລະລາຍແລ້ວ ພາຍໃຕ້ພາກທີ 7, ທ່ານອາດຈະສາມາດປ່ຽນແປງກໍລະນີຂອງທ່ານເປັນພາກອື່ນກໍ່ໄດ້.

ການລົ້ມລະລາຍຂອງທ່ານອາດຈະຖືກລາຍງານໄວ້ໃນບັນທຶກສິນເຊື່ອ (ເຄຣດິດ) ຂອງທ່ານເປັນເວລາດົນເຖິງສິບປີ. ມັນສາມາດມີຜົນກະທົບຕໍ່ກັບຄວາມສາມາດຂອງທ່ານໃນການໄດ້ຮັບສິນເຊື່ອໃນອະນາຄົດ.

## ການພົ້ນໜີ້ເນື່ອງຈາກການລົ້ມລະລາຍແມ່ນຫຍັງ ແລະ ມັນດໍາເນີນການແນວໃດ?

ໜຶ່ງໃນເຫດຜົນທີ່ຜູ້ຍື່ນຄໍາຮ້ອງຂໍລົ້ມລະລາຍແມ່ນເພື່ອໃຫ້ໄດ້ຮັບ “ການພົ້ນໜີ້”. ການພົ້ນໜີ້ແມ່ນຄໍາສັ່ງສານເຊິ່ງກໍານົດວ່າທ່ານບໍ່ຈໍາເປັນຕ້ອງຊໍາລະສ່ວນໃຫຍ່ຂອງໜີ້ທ່ານ. ໜີ້ບາງຈໍານວນບໍ່ສາມາດອານຸຍາດໃຫ້ພົ້ນໄດ້. ຕົວຢ່າງເຊັ່ນ ທ່ານບໍ່ສາມາດພົ້ນໜີ້ສໍາລັບ -

- ພາສີເກືອບທຸກປະເພດ;
- ຄ່າລ້ຽງດູລູກ;
- ຄ່າລ້ຽງດູເມຍ;
- ເງິນກູ້ສໍາລັບນັກສຶກສາເກືອບທຸກປະເພດ;
- ຄ່າປັບໃໝ່ຂອງສານ ແລະ ຄ່າຊົດເຊີຍຄວາມເສຍຫາຍທາງອາຍາ; ແລະ
- ຄ່າບາດເຈັບສ່ວນບຸກຄົນທີ່ເກີດຂຶ້ນຈາກການຂັບຂີ່ໃນຂະນະມຶນເມົາ ຫຼືຢູ່ພາຍໃຕ້ອິດທິພົນຂອງຢາ.

ການພົ້ນໜີ້ພຽງແຕ່ນຳໃຊ້ໄດ້ຕໍ່ກັບໜີ້ທີ່ເກີດຂຶ້ນກ່ອນມື້ທີ່ທ່ານຍື່ນຄຳຮ້ອງລົ້ມລະລາຍເທົ່ານັ້ນ. ນອກນັ້ນ, ຖ້າຜູ້ພິພາກສາພົບວ່າ ທ່ານໄດ້ຮັບເງິນ ຫຼືຊັບສິນໂດຍການຍັກຍອກສໍ້ໂກງ, ໜີ້ອັນນັ້ນອາດຈະບໍ່ໄດ້ຮັບການໃຫ້ພົ້ນໜີ້.

ມັນສຳຄັນວ່າທ່ານຕ້ອງໄດ້ລະບຸລາຍການຊັບສິນ ແລະໜີ້ສິນໃນໜັງສືຍື່ນລົ້ມລະລາຍຂອງທ່ານ. ຕົວຢ່າງ ຖ້າທ່ານບໍ່ໄດ້ລະບຸລາຍການໜີ້ອັນໃດໜຶ່ງ, ມັນເປັນໄປໄດ້ວ່າໜີ້ດັ່ງກ່າວຈະບໍ່ໄດ້ຮັບອານຸຍາດໃຫ້ພົ້ນໜີ້. ນອກນັ້ນ ຜູ້ພິພາກສາຍັງສາມາດປະຕິເສດການຂໍພົ້ນໜີ້ຂອງທ່ານ ຖ້າທ່ານກະທຳບາງຢ່າງທີ່ເປັນການບໍ່ຊື່ສັດຫຼອກລວງທີ່ພົວພັນກັບກໍລະນີການລົ້ມລະລາຍຂອງທ່ານ, ເຊັ່ນວ່າ ທຳລາຍ ຫຼື ຊຸກເຊື່ອງຊັບສິນ, ປອມແປງບັນທຶກ ຫຼື ຂີ້ຕົວະ, ຫຼື ຖ້າທ່ານບໍ່ປະຕິບັດຕາມຄຳສັ່ງຂອງສານ.

ທ່ານພຽງແຕ່ສາມາດໄດ້ຮັບການໃຫ້ພົ້ນໜີ້ຕາມພາກທີ 7 ຄັ້ງດຽວໃນທຸກໆແປດປີ. ກົດລະບຽບຂໍ້ອື່ນໆອາດຈະມີຜົນນຳໃຊ້ຕໍ່ການລົ້ມລະລາຍຂອງທ່ານ ຖ້າໃນອາດີດຜ່ານມາ ທ່ານເຄີຍໄດ້ຮັບການພົ້ນໜີ້ໃນກໍລະນີຂອງພາກທີ 13. ບໍ່ມີໃຜສາມາດບັງຄັບໃຫ້ທ່ານໃຊ້ໜີ້ທີ່ໄດ້ຮັບການໃຫ້ພົ້ນໜີ້ແລ້ວ. ແຕ່ທ່ານສາມາດຈ່າຍທຸກໆໜີ້ທີ່ທ່ານຢາກຈະຈ່າຍດ້ວຍຄວາມສະໝັກໃຈ. ທ່ານບໍ່ຈຳເປັນຕ້ອງເຊັນສັນຍາຮັບຮອງໜີ້ (ເບິ່ງຂ້າງລຸ່ມ) ຫຼື ເອກະສານອື່ນໃດໆເພື່ອຈະຈ່າຍໜີ້ແບບນີ້.

ເຈົ້າໜີ້ບາງຄົນຖືສິດຮຽກຮ້ອງເອົາຄ່າຊົດເຊີຍແບບໝັ້ນຄົງ (ຕົວຢ່າງ ທະນາຄານທີ່ຖືສັນຍາກູ້ຢືມເງິນຊື້ເຮືອນຂອງທ່ານ ຫຼື ບໍລິສັດປ່ອຍເງິນກູ້ທີ່ມີສິດຢຶດເອົາລົດຂອງທ່ານ). ທ່ານບໍ່ຈຳເປັນຕ້ອງຈ່າຍຄ່າຊົດເຊີຍແບບໝັ້ນຄົງດັ່ງກ່າວ ຖ້າທ່ານໄດ້ຮັບການໃຫ້ພົ້ນໜີ້, ແຕ່ວ່າເຈົ້າໜີ້ຍັງສາມາດຢຶດເອົາຊັບສິນດັ່ງກ່າວໄດ້.

**<u>ສັນຍາຮັບຮອງໜີ້ແມ່ນຫຍັງ?</u>**

ເຖິງແມ່ນວ່າໜີ້ສາມາດໃຫ້ພົ້ນໄດ້, ແຕ່ທ່ານອາດຈະມີເຫດຜົນພິເສດຍ້ອນຫຍັງທ່ານຈິ່ງຕ້ອງການຮັບປາກວ່າຈະຈ່າຍມັນ. ຕົວຢ່າງ, ທ່ານອາດຈະຕ້ອງການໂອ້ລົມສ້າງແຜນກັບທະນາຄານເພື່ອຮັກສາລົດຂອງທ່ານໄວ້. ເພື່ອສັນຍາວ່າຈະຈ່າຍໜີ້ສິນນັ້ນ, ທ່ານຕ້ອງໄດ້ເຊັນ ແລະ ຍື່ນສັນຍາຮັບຮອງໜີ້ນຳສານ. ສັນຍາຮັບຮອງໜີ້ແມ່ນຢູ່ພາຍໃຕ້ກົດລະບຽບພິເສດ ແລະ ເຮັດດ້ວຍຄວາມສະໝັກໃຈ. ມັນບໍ່ໄດ້ຖືກກຳນົດໃຫ້ເຮັດໂດຍກົດໝາຍລົ້ມລະລາຍ ຫຼືກົດໝາຍອື່ນໃດໆ. ສັນຍາຮັບຮອງໜີ້ -

- ຕ້ອງເຮັດດ້ວຍຄວາມສະໝັກໃຈ;
- ຕ້ອງບໍ່ເຮັດໃຫ້ເກີດພາລະໜັກເກີນໄປຕໍ່ກັບຕົວທ່ານ ແລະຄອບຄົວຂອງທ່ານ;
- ຕ້ອງຢູ່ໃນຜົນປະໂຫຍດທີ່ດີສຸດຂອງທ່ານ; ແລະ
- ສາມາດຍົກເລີກໄດ້ຕະຫຼອດເວລາ ກ່ອນທີ່ສານຈະອອກຄຳສັ່ງພົ້ນໜີ້ຂອງທ່ານ ຫຼື ພາຍໃນ 60 ວັນ ຫຼັງຈາກທີ່ໄດ້ຍື່ນສັນຍານຳສານ, ເລືອກເອົາອັນທີ່ໃຫ້ເວລາກັບທ່ານຫຼາຍທີ່ສຸດ.

ຖ້າທ່ານແມ່ນລາຍບຸກຄົນ ແລະ ທ່ານບໍ່ມີທະນາຍຄວາມເປັນຕົວແທນ, ສານຕ້ອງໄດ້ຈັດການພິຈາລະນາຕັດສິນວ່າຈະອະນຸມັດສັນຍາຮັບຮອງໜີ້ໃຫ້ທ່ານຫຼືບໍ່. ສັນຍາດັ່ງກ່າວຈະບໍ່ມີຜົນຜູກມັດທາງກົດໝາຍ ຈົນກວ່າມັນຈະໄດ້ຮັບການອະນຸມັດຈາກສານ.

ຖ້າທ່ານໄດ້ຮັບຮອງວ່າຈະໃຊ້ໜີ້ໃດໜຶ່ງ ແລະຕໍ່ມາບໍ່ສາມາດຈ່າຍໜີ້ນັ້ນໄດ້, ທ່ານກໍ່ຈະເປັນໜີ້ຄືກັນກັບວ່າທ່ານບໍ່ມີການລົ້ມລະລາຍເກີດຂຶ້ນ. ໜີ້ຈະບໍ່ຖືກປົດໃຫ້ພົ້ນໜີ້ ແລະ ເຈົ້າໜີ້ສາມາດດຳເນີນການຂໍໃຫ້ທ່ານຊົດໃຊ້ໜີ້ຄ່າຊັບສິນຄືນ ເຊິ່ງເຈົ້າໜີ້ມີສິດຢຶດເອົາຊັບສິນທີ່ທ່ານຍັງຕິດໜີ້ຫຼື ຕິດເງິນກູ້ຊື້ເຮືອນ. ນອກນັ້ນ ເຈົ້າໜີ້ຍັງສາມາດດຳເນີນການທາງກົດໝາຍເພື່ອຕັດສິນໃຫ້ທ່ານຊົດໃຊ້ໜີ້.

**ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ຫຼື ມີຄຳຖາມໃດໆກ່ຽວກັບວ່າກົດໝາຍລົ້ມລະລາຍມີຜົນກະທົບຕໍ່ທ່ານແນວໃດ, ທ່ານອາດຈະຕ້ອງການຄຳປຶກສາດ້ານກົດໝາຍ. ຜູ້ພິທັກຊັບໃນກໍລະນີຂອງທ່ານບໍ່ຮັບຜິດຊອບໃນການໃຫ້ຄຳປຶກສາດ້ານກົດໝາຍແກ່ທ່ານໄດ້.**